# ໂຣກລະບາດ

ໂຣກລະບາດເປັນໂຣກພະຍາດທີ່ຮ້າຍແຮງຫລາຍ. ເປັນແບັກແທເລຍທີ່ບາງຄັ້ງພົບພົ້ນຳໜູ, ກະຮອກ, ສັດຈຳພວກກັດແທ້ນ ແລະໂຕໝັດທີ່ຢູ່ນຳສັດ ເຫລົ່ານີ້. ໂຣກລະບາດນີ້ແບ່ງອອກເປັນຫລາຍຊະນິດເຊັ່ນ: ໂຣກລະບາດທີ່ຕ່ອມນ້ຳເຫລືອງໃຄ່, ໂຣກລະບາດປອດບວມ, ແລະໂຣກລະບາດ ທີ່ເຮັດໃຫ້ເລືອດເປັນພິດ.

## ໂຣກລະບາດທີ່ຕ່ອມນ້ຳເຫລືອງໃຄ່ *(ເປັນຫລາຍກວ່າໝູ່)*

| | |
|---|---|
| **ຂ້າພະເຈົ້າສາມາດຕິດພະຍາດນີ້ແນວໃດ?** | ທ່ານອາດຈະຕິດ *ໂຣກລະບາດທີ່ຕ່ອມນ້ຳເຫລືອງໃຄ່* ຖ້າຫາກວ່າ:<br>• ຖືກສັດຈຳພວກ**ກັດແທ້ນ** ຫລື**ໂຕໝັດ**ທີ່ມີພະຍາດນີ້ກັດ ຫລື<br>• ແບັກແທເລຍຖືກ**ບາດແຜ** ຫລື**ຮອຍບາດທີ່ບໍ່ໄດ້ ປົກໄວ້**. |
| **ພະຍາດນີ້ອັນຕະລາຍບໍ?** | **ອັນຕະລາຍ.** ທ່ານອາດຈະເຖິງແກ່ຊີວິດ, ຖ້າທ່ານ ບໍ່ໄດ້ຮັບຄວາມຊ່ວຍເຫລືອທາງການແພດທັນທີ. |
| **ມັນເປັນພະຍາດຕິດຕໍ່ບໍ?** | **ບໍ່.** ທ່ານບໍ່ສາມາດຕິດພະຍາດນີ້ຈາກຄົນອື່ນ. |
| **ມີອາການຫຍັງແດ່?** | ອາການເລີ່ມສະແດງອອກພາຍໃນ 2-6 ວັນ:<br>• ເປັນໄຂ້ • ເຈັບຫົວ<br>• ຈັບສັ່ນ • ອ່ອນເພຍ<br>• ຕ່ອມຢູ່ຄໍ, ຕ່ອມຢູ່ກ້ອງຂີ້ແຮ້ ຫລືຕ່ອມຢູ່ມູມກົກຂາ, ຈະໃຄ່ແລະເຈັບ<br>ຕໍ່ມາທ່ານອາດຈະຕິດໂຣກລະບາດອີກຊະນິດໜຶ່ງເຊິ່ງ ເອີ້ນວ່າ *ເລືອດເປັນພິດ.* |

## ໂຣກລະບາດປອດບວມ

| | |
|---|---|
| **ຂ້າພະເຈົ້າສາມາດຕິດພະຍາດນີ້ແນວໃດ?** | ທ່ານອາດຕິດໂຣກລະບາດ*ປອດບວມ* ຖ້າຫາກວ່າ:<br>• ທ່ານຢູ່ໃກ້ກັບ**ຄົນ** ຫລື**ສັດທີ່ຕິດພະຍາດ**ນີ້ແລ້ວ ຫລື<br>• **ຫາຍໃຈເອົາ**ໝອກຄວັນ ຫລືທາດອາຍທີ່ປ່ອຍອອກມາ ໃນການກໍ່ການຮ້າຍ. |
| **ພະຍາດນີ້ອັນຕະລາຍບໍ?** | **ອັນຕະລາຍ.** ບັນຫານີ້ອາດເຖິງແກ່ຊີວິດ, ຖ້າທ່ານບໍ່ໄດ້ຮັບ ຄວາມຊ່ວຍເຫລືອທາງການແພດທັນທີ. ຄົນອື່ນທີ່ໃກ້ກັບທ່ານ ຕ້ອງໄດ້ຮັບຄວາມຊ່ວຍເຫລືອທາງການແພດເຊັ່ນກັນ. |
| **ມັນເປັນພະຍາດຕິດຕໍ່ບໍ?** | **ເປັນ.** ທ່ານຈະຕິດພະຍາດນີ້ຈາກຜູ້ທີ່ເປັນພະຍາດນີ້ຢູ່ແລ້ວ. |
| **ມີອາການຫຍັງແດ່?** | ອາການເລີ່ມສະແດງອອກພາຍໃນ 1-3 ວັນ:<br>• ເປັນໄຂ້ • ເຈັບຫົວ ແລະ<br>• ອ່ອນເພຍ.<br>ໃນສອງສາມມື້ທຳອິດ, ທ່ານຈະເປັນໂຣກປອດບວມ ແລະ:<br>• ຫາຍໃຈຫອບ<br>• ເຈັບໜ້າເອິກແລະໄອ. (ບາງເທື່ອຂີ້ກະເທິມີເລືອດ ຫລືນ້ຳ.)<br>ຕໍ່ມາທ່ານອາດຈະຕິດໂຣກລະບາດອີກຊະນິດໜຶ່ງເຊິ່ງເອີ້ນວ່າ *ເລືອດເປັນພິດ.* |

## ຂ້າພະເຈົ້າສາມາດຕິດໂຣກລະບາດ*ເລືອດເປັນພິດ* ໄດ້ແນວໃດ?

ເມື່ອຖືກສັດຈຳພວກກັດແທ້ນຫລືໂຕໝັດທີ່ມີພະຍາດນີ້ກັດ. ຫລື ຈະເປັນພະຍາດແຊກຊ້ອນຂອງໂຣກລະບາດທີ່ຕ່ອມນ້ຳເຫລືອງໃຄ່ ຫລືໂຣກລະບາດປອດບວມ.

ອາການຈະຄ້າຍຄືກັບໂຣກລະບາດທີ່ຕ່ອມນ້ຳເຫລືອງໃຄ່ ແຕ່ທ່ານຍັງມີອາການຕໍ່ໄປນີ້:

- ເຈັບຊ່ວງທ້ອງ
- ຊ໋ອກ ແລະ
- ຜິວໜັງມີຮອຍຊ້ຳເປັນເລືອດ.

## ຈະເຮັດແນວໃດ ຖ້າຫາກຂ້າພະເຈົ້າຄິດວ່າ ໄດ້ຕິດໂຣກລະບາດແລ້ວ?



ຂໍໃຫ້ຕິດຕໍ່ຫາທ່ານໝໍຂອງທ່ານ ຫລືຕິດຕໍ່ໂຮງໝໍ ***ທັນທີ.*** ບັນຫານີ້ ອາດເຖິງແກ່ຊີວິດ, ຖ້າທ່ານບໍ່ ໄດ້ຮັບຄວາມຊ່ວຍເຫລືອທາງການແພດທັນທີ.

### ສຳລັບຂໍ້ມູນເພີ່ມເຕີມຂໍໃຫ້ຕິດຕໍ່ ...

ໂທຫາ CDC (Centers for Disease Control)
ສຳລັບຂໍ້ມູນ ທີ່ເປັນພາສາອັງກິດ:
800-CDC-INFO (800-232-4636)
888-232-6348 (TTY)

ຫລືເຂົ້າໄປ: www.bt.cdc.gov
www.dhs.ca.gov/epo